ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງໄຊຍະບູລີ

ພະແນກອຸດສາຫະກຳ ແລະ ການຄ້າ

ເລກທີ : 1383/ພອຄ.ຊຍ

ວັນທີ: 21 / 6 / 2022

# ແຈ້ງການ

ເຖິງ: - ຫ້ອງການ ອຸດສາຫະກຳ ແລະ ການຄ້າ 11 ເມືອງ. ພາຍໃນແຂວງ

- ສະພາການຄ້າ ແລະ ອຸດສາຫະກາ ແຂວງ ໄຊຍະບູລີ
- ບັນດາບໍລິສັດ ບັນດາບໍລິສັດ ໂຮງງານ ທີ່ນຳໃຊ້ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດ ແຂວງ ໄຊຍະບູລີ.

ເລື່ອງ: ການເລີ່ມຈັດຕັ້ງປະຕິບັດອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຜ່ານລະບົບທາງເອເລັກໂທນິກ(E-CO)

- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີ ກະຊວງ ອຸດສາຫະກຳ ແລະ ການຄ້າສະບັບເລກທີ0273/ອຄ.ກຈພງ,ລົງວັນທີ10 ມີນາ 2022.ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະແນກອຸດສາຫະກຳແລະການຄ້າແຂວງ ແລະນະຄອນຫຼວງ.
- ອີງຕາມ ແຈ້ງການ ສະບັບເລກທີ 0296 / ຫອກຂອ,ລົງວັນທີ 23 ທັນວາ 2019. ວ່າດ້ວຍການຈັດຕັ້ງປະຕິບັດການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຜ່ານລະບົບເອເລັກໂທນິກ.
- ອີງຕາມ ແຈ້ງການສະບັບເລກທີ 1428 / ຫອຄ.ກຂອ ລົງວັນທີ 28 ສິງຫາ 2020. ກ່ຽວກັບການຈັດຕັ້ງ ປະຕິບັດການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ສັນຍາການຄ້າດ້ານສິນຄ້າອາຊຽນຜ່ານລະບົບເອ cantesing ATIGA ETORM D.

ພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງ ໄຊຍະບູລີ ຂໍຖືເປັນກຽດ ແຈ້ງມາຍັງບັນດາ ຫ້ອງການ ອຄ ເມືອງ, ສະພາການຄ້າ ແລະ ອຸດສາຫະກຳ, ຜູ້ປະກອບການທຸລະກິດທີ່ຈະສົ່ງສິນຄ້າອອກໄປຕ່າງປະເທດ ແມ່ນໃຫ້ລົງທະບຽນລະບົບບໍລິການ ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ທາງເອເລັກໂທນິກ ເຊິ່ງຈະເລີ່ມຈັດຕັ້ງປະຕິບັດ ນຳໃຊ້ລະບົບການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍລະບົບ (e - CO). ແຕ່ ວັນທີ 01 ກໍລະກົດ 2022.ເປັນຕົ້ນໄປ ຄຽງຄູ່ກັບລະບົບເຈ້ຍສໍ ແບບເກົ່າ ເຊິ່ງໃນໄລຍະເລີ່ມການຈັດຕັ້ງປະຕິບັດນີ້ຜູ້ປະກອບການ ທຸລະກິດສາມາດເລືອກໄດ້ວ່າຈະໃຊ້ລະບົບ (e-CO ) ຫຼື ເຈ້ຍສໍ ແບບໃດໜຶ່ງກໍ່ໄດ້ ເພື່ອຫັນເປັນທັນສະໄໝ ແລະ ອຳນວຍຄວາມສະດວກໃຫ້ແກ່ຜູ້ດຳເນີນການສົ່ງ ອອກສິນຄ້າທີ່ນຳໃຊ້ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດ ແນ່ໃສ່ການຈັດຕັ້ງປະຕິບັດໃຫ້ຖືກຕ້ອງສອດຄ່ອງກັບລະບຽບກົດໝາຍການ ຂອງ ສປປລາວ ແລະ ສາກົນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນ

ຫົວໜ້າ ພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງ

ຈັນເພັງ ພັນທຸອາມາດ

ຜູ້ປະສານງານ

ທ່ານ ວຽງພອນສະຫວັນ ໂທ: 020 28672926

ທ່ານ ນ. ມະນີວັນປັນຍາແກ້ວ ໂທ: 020 55896665

สแกนด้วย CamScanner